Washington State
**Liquor Control Board**

# ກັນຊາ

## ສິ່ງທີ່ພໍ່ແມ່ຄວນຈະຮູ້ຈັກ

ຊາວໜຸ່ມສ່ວນຫລາຍເລືອກທີ່ຈະບໍ່ໃຊ້ກັນຊາ. ເຖິງຢ່າງໃດກໍຕາມ, ບາງຄົນຈະລອງເບິ່ງ, ແລະບາງຄົນຈະດໍາເນີນໃຊ້ກັນຊາຕໍ່ໄປ.

ການຂະຫຍາຍຕົວຂອງມັນສະໝອງດໍາເນີນໄປຮອດອາຍຸ**25** ປີ.ການໃຊ້ຢາເສບຕິດແນວໃດກໍຕາມ, ລວມທັງກັນຊາ,ສາມາດທໍາຮ້າຍການຂະຫຍາຍຕົວຂອງມັນສະໝອງ.

ການໃຊ້ກັນຊາເພີ້ມການສ່ຽງອັນຕະລາຍໃນບັນຫາດ້ານການສຶກສາ. ຜົນສະທ້ອນຂອງກັນຊາຕໍ່ການຮໍ່າຮຽນ,ຄວາມຊົງຈໍາ, ແລະ ການມີໃຈບຶກບືນສາມາດນໍາພາໄປສູ່ຄວາມຫຍຸ້ງຍາກຢູ່ໃນໂຮງຮຽນ.

### ເວົ້າກັນແຕ່ທໍາອິດ. ເວົ້າກັນເລື້ອຍໆ.

- ທ່ານເປັນອິດທິພົນອັນດັບນຶ່ງຢູ່ໃນຊີວິດຂອງລູກຂອງທ່ານ.
- ເວົ້າກັນແຕ່ທໍາອິດ ແລະ ເວົ້າກັນເລື້ອຍໆ ກ່ຽວກັບການທໍາການຕັດສິນໃຈທີ່ຖືກຕ້ອງ.
- ຕັ້ງຄວາມຄາດໝາຍໄວ້.
- ເວົ້າລົມກັນເຖິງກົດລະບຽບ ແລະ ບັງຄັບໃຊ້ຜົນທີ່ອອກມາ.

ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບກັນຊາ:
www.Learn About MarijuanaWA.org
ຫລື www.drugfree.org

ເພື່ອຈະຕິດຕໍ່ຫາ**WSLCB** ສົ່ງອີແມລ໌:
prevention@liq.wa.gov

ຖ້າຫາກວ່າຄົນໃດຄົນນຶ່ງທີ່ທ່ານຮູ້ຈັກກໍາລັງຕໍ່ສູ້ນໍາການຕິດຢາເສບຕິດຢູ່, ໂທຫາ:
ສາຍຊ່ວຍພັກຟື້ນຂອງຣັດວໍຊິງຕັນໄດ້ທີ່1.866.789.1511

ເພື່ອຈະຂໍເອົາເອກສານພິມອອກມາອັນນີ້ໃນແບບຮູບຮ່າງຕ່າງໆ, ຕິດຕໍ່ຫາຜູ້ປະສານງານຂອງວ ADAໄດ້ທີ່ເລກ (360) 664-1783.

Washington State
Department of Social & Health Services

DSHS 22-1558 LA (Rev. 10/14)

**Washington State**
**Liquor Control Board**

# ກັນຊາ

## ກັນຊາບໍ່ເປັນອັນຕະລາຍ.

### ຮູ້ຈັກຄວາມຈິງ

ກັນຊາທຳຮ້າຍການປະສານງານ ແລະ ການ ຮັບຮູ້,ສະທ້ອນເຖິງການຮຽນຮູ້ແລະຄວາມຊົງຈຳ, ແລະສາມາດເພີ້ມຄວາມກະວົນກະວາຍ, ຄວາມຕົກໃຈແລະ ຄວາມຫວາດລະແວງ. ການຄົ້ນຄວ້າສະແດງໃຫ້ເຫັນວ່າ ຊາວຫນຸ່ມນຶ່ງໃນແປດຄົນຜູ້ທີ່ໃຊ້ກັນຊາກ່ອນອາຍຸ14ປີກາຍເປັນຕິດເລີຍ.

### ການສ່ຽງອັນຕະລາຍບາງຢ່າງຂອງການສູບກັນຊາຕໍ່ການບໍຣິໂພກອາຫານທີ່ປະສົມດ້ວຍກັນຊາແມ່ນແຕກຕ່າງກັນ.

ການຫາຍໃຈເອົາຄວັນແນວໃດກໍ່ຕາມເປັນອັນຕະລາຍຕໍ່ປອດຂອງທ່ານ. ການບໍຣິໂພກອາຫານປະສົມດ້ວຍກັນຊາຍັງຈະສາມາດເປັນອັນຕະລາຍຍ້ອນວ່າມັນໃຊ້ເວລາດົນກວ່າທີ່ຈະຮູ້ສຶກຜົນສະທ້ອນ. ມັນງ່າຍກວ່າທີ່ຈະໃຊ້ຫລາຍໂພດຍ້ອນວ່າຜົນສະທ້ອນໄດ້ຖືກແກ່ເວລາ.

### ການໃຊ້ກັນຊາແບບຜັກຜ່ອນຢ່ອນອາຣົມມີການຈຳກັດອາຍຸ.

ມີແຕ່ຜູ້ອາຍຸ21ປີ ຫລື ແກ່ກວ່າເທົ່ານັ້ນສາມາດມີກັນຊາໃນກັມມະສິດ, ໂດຍມີຂອບເຂດ1ອາວຊ໌ເປັນກັນຊາທີ່ໃຊ້ໄດ້, 16ອາວຊ໌ໃນແບບເປັນກ້ອນ, ແລະ 72ອາວຊ໌ໃນແບບເປັນນ້ຳ.

### ບ່ອນທີ່ທ່ານສາມາດໃຊ້ກັນຊາແມ່ນຈຳກັດ.

ກັນຊາບໍ່ສາມາດຖືກໃຊ້ໃຫ້ສາທາຣະນະຊົນເຫັນຢູ່ກາງແປນ. ມັນບໍ່ຖືກອະນຸຍາດອີກຄືກັນຢູ່ໃນດິນແດນຂອງຣັດຖະບານກາງແລະຊົນເຜົ່າສ່ວນຫລາຍ.

### ການປັບໄຫມລົງໂທດສຳລັບການໃຊ້ກັນຊາສຳລັບຜູ້ທີ່ມີອາຍຸຕ່ຳກວ່າ21ປີສາມາດເປັນຫນັກ.

ຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ21 ປີ,ທ່ານສາມາດຖືກກ່າວຫາດ້ວຍເດັກນ້ອຍຕ່ຳກວ່າກະສຽນມີໃນກັມມະສິດ. ຖ້າຫາກວ່າທ່ານມີຫລາຍກວ່າ40ແກຣມ໌, ມັນເປັນຄວາມຜິດອາດຍາຈຳພວກ C (ປັບໄຫມ $10,000ແລະ/ຫລືເຂົ້າຄຸກ10ປີ).

**ມັນບໍ່ຖືກຕ້ອງສຳລັບພໍ່ແມ່ທີ່ຈະແບ່ງປັນກັນຊານຳລູກຂອງເຂົາເຈົ້າ.** ມັນເປັນອາດຊະຍາກັມທີ່ຈະເອົາກັນຊາໃຫ້ເດັກນ້ອຍຕ່ຳກວ່າກະສຽນຄົນໃດຄົນນຶ່ງ.